# ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

## ບົດສະຫຼຸບການເຄື່ອນໄຫວທຸລະກິດ ປະຈຳ ປີ 2014

www.bcel.com.la

## 1. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະຈົດທະ ບຽນຢູ່ໃນ ສປປ ລາວ.

ທະນະຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989 ອອກໂດຍທະນາຄານແຫ່ງ ສປປ ລາວ ແລະ ໃບອະນຸຍາດດຳເນີນທຸລະກິດດ້ານການທະນາຄານ ສະບັບປຸງຄັ້ງລ່າສຸດ ເລກທີ 4284/ທຫລ, ລົງວັນທີ 11 ພະຈິກ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ທຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ພ້ອມດຽວກັນນັ້ນ, ກະຊວງການເງິນໄດ້ຕາງໜ້າໃຫ້ລັດຖະບານເປັນຜູ້ຖືຮຸ້ນໃຫຍ່ສຸດໂດຍຖືຮຸ້ນ 70% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ COFIBRED ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 70% ຂອງທຶນທີ່ປະກອບແລ້ວ, ຮຸ້ນຂອງນັກລົງທຶນພາຍໃນ (ລວມທັງພະນັກງານ ທຄຕລ) ແມ່ນ 10% ຂອງທຶນທີ່ໄດ້ປະກອບແລ້ວ , ຄູ່ຮ່ວມຮຸ້ນທາງຍຸດທະສາດຖື 10% ຂອງທຶນທັງໝົດທີ່ໄດ້ປະກອບແລ້ວ ແລະ ຜູ້ຖືຮຸ້ນຈາກຕ່າງປະເທດຖື 10%.

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ບຸກຄົນຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ,ການບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄ້ຳປະກັນ, ໃຫ້ບໍລິການຊື້ຂາຍວັດຖຸມີຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

### ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 31 ທັນວາ 2014 ແມ່ນ 682,888 ລ້ານກີບ.

### ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 31 ທັນວາ 2014 ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ສີ່ (4) ບໍລິສັດຮ່ວມທຶນ, ສິບເກົ້າ (19) ສາຂາຫລັກ, ຫົກສິບຫ້າ (65) ໜ່ວຍບໍລິການ ແລະ ສິບຫ້າ (15) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

## 2. ວິໄສທັດ

ທຄຕລ ໄດ້ກຳນົດວິໄສທັດຂອງຕົນ ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງຄື: "ເປັນທະນາຄານທີ່ນຳໜ້າ ທັນຍຸກທັນສະໄໝ ໄດ້ມາດຕະຖານສາກົນ" ທຄຕລ ໄດ້ມຸ່ງເນັ້ນພັດທະນາຕົນເອງທຸກດ້ານ ໃຫ້ເປັນທະນາຄານທັນສະໄໝ ບໍລິການລູກຄ້າດ້ວຍຄວາມສະດວກສະບາຍໄດ້ມາດຕະຖານສາກົນ ເປັນທີ່ຍອມຮັບຂອງລູກຄ້າ ແລະ ສະຖາບັນການເງິນທັງພາຍໃນແລະຕ່າງປະເທດ ຮັກສາຄວາມເປັນທະນາຄານທຸລະກິດນຳໜ້າ ຢູ່ ສປປ ລາວ ແລະ ກ້າວໄປສູ່ລະດັບພູມິພາກ ແລະ ລະດັບສາກົນເທື່ອລະກ້າວ.

## 3. ພາລະກິດ

- ປັບປຸງໂຄງຮ່າງການຈັດຕັ້ງ ແລະ ລະບຽບການຕ່າງໆພາຍໃນທີ່ມີຢູ່ແລ້ວ ພ້ອມທັງສ້າງລະບຽບເພີ່ມເຕີມຈຳນວນໜຶ່ງ ເພື່ອໃຫ້ສອດຄ່ອງກັບກົດໝາຍຂອງ ສປປ ລາວ ແລະ ສອດຄ່ອງກັບລະບຽບຂອງ ທຄຕລ ມະຫາຊົນ ຢ່າງຮັດກຸມ.
- ເອົາໃຈໃສ່ບໍລິຫານງານວຽກງານພາຍໃນຢ່າງຮັດກຸມ ແລະ ຄຸ້ມຄອງຄວາມສ່ຽງໃນແຕ່ລະດ້ານ.
- ຂະຫຍາຍຕາໜ່າງການບໍລິການພາຍໃນປະເທດໃຫ້ກວ້າງຂວາງ ໂດຍການຂະຫຍາຍໜ່ວຍບໍລິການໃນຈຸດທີ່ເຫັນວ່າເໝາະສົມ. ນອກຈາກນີ້, ຍັງຈະຮ່ວມທຸລະກິດກັບບັນດາທະນາຄານຕ່າງປະເທດ ແລະ ພົວພັນບັນດາທະນາຄານພາຍໃນ ແລະ ຕ່າງປະເທດ ເພື່ອບໍລິການລູກຄ້າໃຫ້ໄດ້ຕາມຄວາມຕ້ອງການ.
- ຈັດຕັ້ງຜັນຂະຫຍາຍ ຮູບແບບບໍລິການໃໝ່ ຕາມການຮັບຮອງຂອງສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ໃຫ້ປະກົດຜົນເປັນຈິງ.
- ຄົ້ນຄວ້າປະກອບທຶນເພີ່ມ ໃຫ້ ທຄຕລ.
- ພັດທະນາລະບົບບໍລິການ ແລະ ລະບົບຂໍ້ມູນຂ່າວສານໃຫ້ໄດ້ມາດຕະຖານ.
- ພັດທະນາລະບົບການຊຳລະສະສາງ ທີ່ສາມາດເຊື່ອມໂຍງກັບຕະຫຼາດຫຼັກຊັບ ໃນການຊື້-ຂາຍ ຫຼັກຊັບ.
- ເຊື່ອມໂຍງລະບົບເຄືອຄ່າຍບໍລິການທາງເອເລັກໂທນິກ ກັບບັນດາທະນາຄານພາຍໃຫ້ສຳເລັດ.
- ຄົ້ນຄວ້າຜະລິດຕະພັນໃໝ່ ໃຫ້ມີຄວາມຫຼາກຫຼາຍໃນການບໍລິການ ເປັນຕົ້ນແມ່ນຜະລິດຕະພັນເອເລັກໂທນິກ ແລະ ຜະລິດຕະພັນອື່ນໆ ຈຳນວນໜຶ່ງ ເພື່ອຕອບສະໜອງຄວາມຕ້ອງການຂອງສັງຄົມ.

## 4. **ກົງຈັກການຈັດຕັ້ງ.**

### 4.1 ໂຄງຮ່າງການຈັດຕັ້ງ ທຄຕລ.

ໂຄງຮ່າງການຈັດຕັ້ງຂອງ ທຄຕລ ປະກອບດ້ວຍສະພາບໍລິຫານ ຈຳນວນ 8 ທ່ານ, ຄະນະອຳນວຍການ ຈຳນວນ 9 ທ່ານ[1], 10 ພະແນກ 3 ສູນ, 19 ສາຂາ, 65 ໜ່ວຍບໍລິການ ແລະ 15 ຫ້ອງແລກປ່ຽນເງິນຕາທົ່ວປະເທດ.

---

[1] ຕາມບົດລາຍງານຖານະການເງິນ 2014 ຂອງກວດສອບພາຍນອກ ແມ່ນລວມທັງຄະນະອຳນວຍການທີ່ຍົກຍ້າຍໄປຮັບໜ້າທີ່ໃໝ່ ແລະ ອອກຮັບບຳເນັດ.

5. **ການຈັດຕັ້ງປະຕິບັດພາລະກິດໃນປີ 2014.**

- ສຳເລັດການປັບປຸງໂຄງຮ່າງການຈັດຕັ້ງ ເພື່ອໃຫ້ສອດຄ່ອງກັບແຜນຍຸດທະສາດ ໂດຍການສ້າງຕັ້ງພະແນກ Corporate ແລະ ໄດ້ໂອນບໍລິສັດລັດໃຫ້ເຊົ່າສິນເຊື່ອ ທຄຕລ ເຂົ້າມາລວມສູນເປັນຂະແໜງໜຶ່ງ ຂອງພະແນກສິນເຊື່ອ (ສຳນັກງານໃຫຍ່) ທຄຕລ.
- ສາມາດຂະຫຍາຍຕາໜ່າງການບໍລິການໄດ້ 4 ໜ່ວຍຄື: ໜ່ວຍບໍລິຫານເມືອງໄຊເສດຖາ ແຂວງ ອັດຕະປື, ໜ່ວຍບໍລິການຍິມມະລາດ ແຂວງ ຄຳມ່ວນ, ໜ່ວຍບໍລິການເມືອງຄູນ ແຂວງ ຊຽງຂວາງ ແລະ ໜ່ວຍບໍລິການທ່າງ່ອນ. ຍົກລະດັບໜ່ວຍບໍລິການຊົ່ງຈຽງໃຫ້ເປັນໜ່ວຍບໍລິການຄົບວົງຈອນ ແລະ ຍົກລະດັບໜ່ວຍບໍລິການໂພນໂຮງໃຫ້ເປັນສາຂາ.

ນອກຈາກນີ້, ທຄຕລ ຍັງໄດ້ຮ່ວມທຸລະກິດກັບບັນດາທະນາຄານຕ່າງປະເທດເປັນຕົ້ນແມ່ນຮ່ວມມືກັບທະນາຄານພູຕຽນ ສ້າງຕັ້ງທະນາຄານ ລາວ-ຈີນຂຶ້ນ ພ້ອມທັງພົວພັນຮ່ວມມືບັນດາທະນາຄານພາຍໃນ ແລະ ຕ່າງປະເທດ ໂດຍສະເພາະທະນາຄານມິຊຸໂຮ(ຍີ່ປຸ່ນ),TMB,K-BANK ປະເທດໄທ ແລະ ທະນາຄານອື່ນໆ.

- ວຽກງານການຈັດຕັ້ງຮູບແບບບໍລິການໃໝ່: ສຳເລັດການກະກຽມຄວາມພ້ອມໃນດ້ານຕ່າງໆ ຂອງການລວມສູນຊັບສິນບັດ ໃນຕົ້ນປີ 2015.
- ເຊື່ອມໂຍງລະບົບຕູ້ ATM ລະຫວ່າງ ທຄຕລ ກັບ 4 ທະນະຄານຄື: ທະນາຄານສົ່ງເສີມກະສິກຳ, ທະນາຄານກຸງສີອາຍຸດທະຍາ, ທະນາຄານພັດທະນາລາວ ແລະ ທະນາຄານຮ່ວມພັດທະນາ. ໄດ້ເຊັນສັນຍາຮ່ວມມືກັບ China Unionpay ເພື່ອພັດທະນາຜະລິດຕະພັນບັດ.
- ສຳເລັດການພັດທະນາຜະລິດຕະພັນໃໝ່ເປັນຕົ້ນແມ່ນ ບັດຊຳລະພາສີ-ອາກອນ ແລະ ພັນທະອື່ນໆ ຜ່ານລະບົບບໍລິການ ທຄຕລ, ບັດເຕີມມູນຄ່າບັດພາຫະນະຂ້າມຂົວມິດຕະພາບລາວ-ໄທ 1 ຜ່ານຜະລິດຕະພັນ BCEL ONE ຮ່ວມກັບບໍລິສັດ TK ແລະ ຜະລິດຕະພັນໂອນເງິນດ່ວນລະຫວ່າງປະເທດ SPEEDSEND.ພ້ອມກັນນັ້ນ, ຍັງໄດ້ຮັບບໍລິການຊຳລະອັດຕະໂນມັດ (Auto Pay) ໃຫ້ 2 ບໍລິສັດຄື: ບໍລິສັດອີອອນໃຫ້ເຊົ່າສິນເຊື່ອ ແລະ ບໍລິສັດສີສົມບັດ ໃຫ້ເຊົ່າສິນເຊື່ອ ຜ່ານລະບົບບໍລິການ ທຄຕລ.
- ສືບຕໍ່ຄົ້ນຄວ້າການປະກອບທຶນເພີ່ມ ໃຫ້ ທຄຕລ.
- ສືບຕໍ່ພັດທະນາລະບົບການຊຳລະສະສາງ ທີ່ສາມາດເຊື່ອມໂຍງກັບຕະຫຼາດຫຼັກຊັບ ໃນການຊື້-ຂາຍຫຼັກຊັບ.

6. **ການເຄື່ອນໄຫວຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ຄະນະກຳມະການອື່ນໆ**

➢ **ສະພາບໍລິຫານ**

ຈັດກອງປະຊຸມສະພາບໍລິຫານ ສະໄໝວິສາມັນ 1 ຄັ້ງ ແລະ ສະໄໝສາມັນ 2 ຄັ້ງ ພ້ອມທັງປະຕິບັດຈ່າຍເງິນປັນຜົນໃຫ້ຂາຮຸ້ນ 06 ເດືອນ ຕົ້ນປີ 2014 ຈຳນວນ 360 ກີບ/ຮຸ້ນ, ຮັບຮອງເອົາ Mr Vincent GROS ເລຂາທິການ COFIBRED ເປັນສະມາຊິກສະພາບໍລິຫານ ທຄຕລ ໃນນາມຕາງໜ້າຄູ່ຮ່ວມຍຸດທະສາດ ແທນ Mr Yves Jacquot ແລະ ດຳເນີນການເພີ່ມທຶນຈົດທະບຽນໃຫ້ທະນາຄານຮ່ວມທຸລະກິດລາວ-ຫວຽດນາມ.

➢ **ຄະນະກຳມະການບໍລິຫານງານ ແລະ ວາງແຜນຍຸດທະສາດ**

ຄະນະກຳມະການບໍລິຫານງານ ທຄຕລ ໄດ້ດຳເນີນກອງປະຊຸມປະເມີນທົບທວນຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຕ່າງໆເປັນປະຈຳໃນແຕ່ລະເດືອນ ທົບທວນຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳທຸກໆໄຕຣມາດ, ຄົ້ນຄວ້ານຳສະເໜີສະມາຊິກສະພາບໍລິຫານຊຸດໃໝ່ ຜູ້ທີ່ເໝາະສົມ ເພື່ອນຳສະເໜີຮັບຮອງໃນສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ, ຮັບຮອງຜົນກວດສອບພາຍນອກໃນແຕ່ລະໄຕຣມາດ, ເພື່ອໃຫ້ສາມາດຮັບ

ຮອງໃນກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ, ຄົ້ນຄວ້າປຶກສາຫາລືບໍລິຫານວຽກງານການດຳເນີນທຸລະກິດຕ່າງໆໃຫ້ດຳເນີນໄປຕາມແຜນການເປົ້າໝາຍທີ່ວາງໄວ້.

➢ **ຄະນະກຳມະການຄວາມສ່ຽງ**

ຄະນະກຳມະການ RMAC ໄດ້ເອົາໃຈໃສ່ໃນການຕິດຕາມ ແລະ ປະເມີນຄວາມສ່ຽງ, ຄົ້ນຄວ້າການປ້ອງກັນຄວາມສ່ຽງໃນດ້ານຕ່າງໆ, ຂອງທະນາຄານຕ່າງໆ ຈັດເຝິກອົບຮົມໃຫ້ບັນດາພະນັກງານ ທຄຕລ ໃນທົ່ວລະບົບ ໃນວຽກງານ AML

- ຕິດຕັ້ງລະບົບໂປຼແກຣມ Siron AML ແລະ Siron KYC, ຈັດຝຶກອົບຮົມວຽກງານ AML ໃຫ້ບັນດາສາຂາ ທຄຕລ ທົ່ວລະບົບ ແລະ ສຳເລັດການລົງທະບຽນກົດໝາຍ FATCA.
- ມີການຄຸ້ມຄອງຄວາມສ່ຽງດ້ານຮາດແວ Server& Network, ການຄຸ້ມຄອງຄວາມສ່ຽງດ້ານໂປຣແກຣມ ຊອບແວຕ່າງໆ ແລະ ການຄຸ້ມຄອງຄວາມສ່ຽງດ້ານຖານຂໍ້ມູນຂອງທະນາຄານ.
- ຄຸ້ມຄອງບໍລິຫານສິນເຊື່ອໃຫ້ມີຄຸນນະພາບ, ປ້ອງກັນຄວາມສ່ຽງໃນຕໍ່ໜ້າ, ເອົາໃຈໃສ່ທົບທວນຈັດຊັ້ນໜີ້ຕາມລະບົບ ທຄຕລ ລູກຄ້າສິນເຊື່ອຢ່າງເປັນປະຈຳ ແລະ ພ້ອມທັງເອົາໃຈໃສ່ແກ້ໄຂບັນຫາໜີ້ NPL.
- ຄຸ້ມຄອງບໍລິຫານຄວາມສ່ຽງໃນການເກັບຮັກສາເງິນສົດ.
- ປ້ອງກັນຄວາມສ່ຽງດ້ານການບໍລິການບັດອີເລັກໂທນິກທັງບັດພາຍໃນ, ບັດຕ່າງປະເທດ ແລະ ການເຮັດທຸລະກຳດ້ານການເງິນທາງດ້ານອິນເຕີເນັດ.

➢ **ຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ**

ຄະນະກຳມະການ ALCO ໄດ້ເອົາໃຈໃສ່ສຶກສາຄົ້ນຄວ້າຄວາມສ່ຽງດ້ານການບໍລິຫານ, ດ້ານບໍລິການ, ດ້ານບຸກຄະລາກອນ, ການຊຳລະສະສາງ ແລະ ອື່ນໆເຊັ່ນ:

- ບໍລິຫານທຶນລວມສູນໃຫ້ມີສະພາບຄ່ອງ ແລະ ໃຫ້ເກີດປະໂຫຍດສູງສຸດແກ່ທະນາຄານ.
- ປັບປຸງຄົ້ນຄວ້າອັດຕາດອກເບ້ຍເງິນຝາກ, ເງິນກູ້ ແລະ ຄ່າທຳນຽມບໍລິການຕາມຄວາມເໝາະສົມກັບສະພາບເສດຖະກິດໃນປະຈຸບັນ ຈຳນວນ 5 ຄັ້ງ.

ປະຕິບັດຄວບຄຸມດ້ານອັດຕາແລກປ່ຽນ, ການຊື້-ຂາຍ ເງິນຕາສະກຸນຕ່າງໆ ຕາມລະບຽບການຂອງ ທະນາຄານແຫ່ງ ສປປ ລາວ ວາງອອກ.

## 7. ການເຄື່ອນໄຫວການດຳເນີນທຸລະກິດຂອງ ທຄຕລ ໃນປີ 2014

ຜ່ານການດຳເນີນທຸລະກິດຜ່ານມາ ທຄຕລ ສາມາດຈັດຕັ້ງປະຕິບັດດ້ານແຜນທຸລະກິດໄດ້ດີພໍສົມຄວນ, ແຕ່ຄຽງຄູ່ກັບຂໍ້ຫຍຸ້ງຍາກຂອງມະຫາພາກ ເຮັດໃຫ້ພວກເຮົາບໍ່ສາມາດບັນລຸແຜນການປີໄດ້ຫຼາຍດ້ານໃນທົ່ວລະບົບ ທຄຕລ ດັ່ງນີ້:

❖ **<u>ຜົນສຳເລັດຂອງການລະດົມທຶນ.</u>**

ທຄຕລ ຍັງສືບຕໍ່ນຳໃຊ້ຍຸດທະສາດການລະດົມທຶນ ການບໍລິການລູກຄ້າເງິນຝາກຕາມວັດທະນາທຳຂອງ ທຄຕລ ຜ່ານມາ, ສືບຕໍ່ປັບປຸງວິທີການທະນຸບຳລຸງຈິດໃຈສົ່ງເສີມການຝາກເງິນຂອງລູກຄ້າດ້ວຍວິທີການຄົ້ນຄວ້າຫາທາງເລືອກໃຫ້ລູກຄ້າຕື່ມ ໂດຍສະເພາະແມ່ນເງິນຝາກເພື່ອລູກຫຼານ ແລະ ການຈັດແຍກກຸ່ມລູກຄ້າເພື່ອດູແລເປັນການສະເພາະ. ນອກຈາກນີ້, ຍັງໄດ້ປັບປຸງອັດຕາດອກເບ້ຍເງິນຝາກໃຫ້ເໝາະສົມກັບໄລຍະປະຈຸບັນ ເຮັດໃຫ້ເງິນຝາກ ທຄຕລ ນັບມື້ນັບສູງຂຶ້ນມາຮອດປະຈຸບັນເງິນຝາກ ທຄຕລ ເກີນແຜນການປີ 25.3% ແລະ ເພີ່ມຂຶ້ນຈາກປີຜ່ານມາ 43%.

❖ <u>ການຂະຫຍາຍ ແລະ ຄຸ້ມຄອງສິນເຊື່ອ.</u>

ມາຮອດທ້າຍປີ 2014 ສາມາດຂະຫຍາຍສິນເຊື່ອເພີ່ມຂຶ້ນ ສາມາດແກ້ໄຂໜີ້ NPL ໃນພັງ ແລະ ນອກພັງໄດ້ຈຳນວນຫຼາຍ.

❖ <u>ຜົນການດຳເນີນທຸລະກິດຍອດຊັບສິນ-ໜີ້ສິນ</u>

**ຍອດຊັບສິນ**: ໃນປີ 2014 ລວມທັງໝົດມີ 23,489 ຕື້ກີບ ລື່ນແຜນການປີ 19,7% ທຽບໃສ່ປີ 2013 ທີ່ຜ່ານມາເພີ້ມຂຶ້ນ ເພີ້ມຂຶ້ນ 38,9%.

❖ **ການປະຕິບັດແຜນລາຍຮັບ-ລາຍຈ່າຍ.**

**ກ. ການປະຕິບັດແຜນລາຍຮັບ.**

ທຄຕລ ສາມາດສ້າງລາຍຮັບ ພາຍໃນປີ 2014 ໃນແຕ່ລະດ້ານໄດ້ລື່ນແຜນການເປັນສ່ວນໃຫຍ່ຄື: ລາຍຮັບຈາກດອກເບ້ຍເງິນກູ້, ລາຍຮັບຄ່າທຳນຽມ ແລະ ລາຍຮັບສຸດທິຈາກການຊື້-ຂາຍເງິນຕາເປັນຕົ້ນ.

**ຂ. ການປະຕິບັດແຜນລາຍຈ່າຍ.**

ໃນປີ 2014 ທຄຕລ ມີລາຍຈ່າຍທີ່ເພີ້ມຂຶ້ນເປັນຕົ້ນແມ່ນ ລາຍຈ່າຍດອກເບ້ຍເງິນຝາກຂອງລູກຄ້າ ຍ້ອນການເພີ້ມຂຶ້ນຂອງເງິນຝາກຢ່າງວ່ອງໄວຈາກປີຜ່ານມາເຖິງ 43% ຈຶ່ງເຮັດໃຫ້ລາຍຈ່າຍດອກເບ້ຍເພີ້ມຂຶ້ນເປັນຈຳນວນຫຼາຍ.

**ຄ. ກຳໄລ/ຂາດທຶນ.**

ປີ 2014 ທຄຕລ ມີກຳໄລກ່ອນອາກອນ 156,1 ຕື້ກີບ.

ຄະນະອຳນວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ພັນຊະນະ ຄຸນນຸວົງ

**ໝາຍເຫດ**: ສຳລັບຕົວເລກຜົນການດຳເນີນທຸລະກິດແມ່ນອີງຕາມເອກະສານລາຍງານການເງິນສັງລວມກິດຈະການມາດຕະຖານສາກົນ ປີ 2014.